ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 631 /ລບ
ນະຄອນຫຼວງວຽງຈັນ, ວັນທີ 24.12.2020.

# ດຳລັດ
# ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການຄຸ້ມຄອງໄພພິບັດ ສະບັບເລກທີ 71/ສພຊ, ລົງວັນທີ 24 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 4103/ຮສສ, ລົງວັນທີ 07 ທັນວາ 2020.

ລັດຖະບານ ອອກດຳລັດ

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄຸ້ມຄອງໄພພິບັດ ເພື່ອລະດົມທຶນ ແລະ ສະສົມທຶນຈາກພາຍໃນ ແລະ ຕ່າງປະເທດ ແນໃສ່ສະໜອງທຶນ ໃຫ້ແກ່ການຊ່ວຍເຫຼືອສຸກເສີນ, ການສ້ອມແປງໂຄງລ່າງພື້ນຖານທີ່ຈຳເປັນ, ການຊອກຄົ້ນ, ຄົ້ນຫາ ແລະ ກູ້ໄພ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນຜູ້ປະສົບໄພພິບັດ ກັບຄືນສູ່ສະພາບປົກກະຕິ ຫຼື ດີຂຶ້ນກວ່າເກົ່າ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### ມາດຕາ 2 ກອງທຶນຄຸ້ມຄອງໄພພິບັດ

ກອງທຶນຄຸ້ມຄອງໄພພິບັດ ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນເພື່ອລະດົມ ແລະ ສະສົມທຶນ ຈາກແຫຼ່ງຕ່າງໆ ແນໃສ່ຮັບປະກັນ ໃຫ້ມີງົບປະມານ ແລະ ຍືນຍົງ ເພື່ອໃຫ້ນຳໃຊ້ເຂົ້າໃນການຄວບຄຸມໄພພິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 3 ຫຼັກການຄຸ້ມຄອງ ແລະ ນຳໃຊ້

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄຸ້ມຄອງໄພພິບັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;
2. ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ ແລະ ເປີດເຜີຍ;
3. ມີການກວດກາ ແລະ ກວດສອບຢ່າງເປັນປົກກະຕິ ຕາມກົດໝາຍ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

**ມາດຕາ 4 ແຫຼ່ງລາຍຮັບຂອງກອງທຶນ**

ແຫຼ່ງລາຍຮັບຂອງກອງທຶນຄຸ້ມຄອງໄພພິບັດ ຕົ້ນຕໍມີ ດັ່ງນີ້:

1. ງົບປະມານແຫ່ງລັດຕາມການຈັດສັນງົບປະມານປະຈຳປີ;
2. ການປະກອບສ່ວນຂອງໂຄງການລົງທຶນ, ພາກສ່ວນທຸລະກິດ ແລະ ບຸກຄົນທົ່ວໄປ;
3. ການຊ່ວຍເຫຼືອຂອງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບຈາກການລະດົມທຶນ;
5. ດອກເບ້ຍເງິນຝາກກອງທຶນຄຸ້ມຄອງໄພພິບັດ ຢູ່ທະນາຄານທຸລະກິດ;
6. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ການນຳໃຊ້ກອງທຶນ**

ກອງທຶນຄຸ້ມຄອງໄພພິບັດ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການຊ່ວຍເຫຼືອສຸກເສີນ ເປັນຕົ້ນ ບ່ອນຢູ່ອາໄສຊົ່ວຄາວ, ອາຫານ, ນ້ຳດື່ມ, ນ້ຳໃຊ້, ການບໍລິການແພດສຸກເສີນ, ສຸບກັກກັນພະຍາດລະບາດ, ຢາ, ເຄື່ອງມືການແພດ, ເຄື່ອງນຸ່ງຫົ່ມ, ເງິນອຸດໜູນ, ການສ້າງຕັ້ງສູນບັນຊາການສຸກເສີນ ຢູ່ສູນກາງ ແລະ ທ້ອງຖິ່ນ ບ່ອນ ເກີດໄພພິບັດ, ຈັດສັນທີ່ພັກຊົ່ວຄາວ, ສາງເກັບມ້ຽນເຄື່ອງ, ການຈັດສົ່ງ, ແຈກຢາຍ ເຄື່ອງຊ່ວຍເຫຼືອບັນເທົາທຸກສຸກເສີນ;
2. ການສ້ອມແປງ ໂຄງລ່າງພື້ນຖານທີ່ຈຳເປັນ ເພື່ອສາມາດນຳໃຊ້ໄດ້ໃນການຕອບໂຕ້ສຸກເສີນ ເປັນຕົ້ນ ເສັ້ນທາງ, ຂົວ, ໄຟຟ້າ, ໂທລະຄົມມະນາຄົມ, ນ້ຳສະອາດ, ສຸຂານາໄມ, ໂຮງໝໍ;
3. ການປະເມີນຜົນເສຍຫາຍ ແລະ ຄວາມຕ້ອງການຮີບດ່ວນ ເບື້ອງຕົ້ນ, ຈັດຊື້ອຸປະກອນຮັບໃຊ້ທີ່ຈຳເປັນ ໃນການຮັບໃຊ້ວຽກງານສຸກເສີນ ແລະ ວຽກງານກູ້ໄພແກ້ໄຂໃນເວລາເກີດໄພພິບັດສຸກເສີນ;
4. ຄຸ້ມຄອງບໍລິຫານກອງທຶນ ຕາມການຕົກລົງຂອງ ສະພາບໍລິຫານກອງທຶນ ແລະ ຄະນະກຳມະການຄຸ້ມຄອງໄພພິບັດ.

**ມາດຕາ 6 ການຖອນເງິນກອງທຶນ**

ການຖອນເງິນອອກຈາກບັນຊີເງິນຝາກຂອງກອງທຶນ ຕ້ອງຖອນດ້ວຍແຊັກທະນາຄານ ທີ່ມີສອງລາຍເຊັນຂອງຜູ້ທີ່ໄດ້ຮັບການມອບສິດ ຈາກສະພາບໍລິຫານກອງທຶນ ຈຶ່ງສາມາດຖອນເງິນອອກໄດ້.

ການຖອນເງິນອອກຈາກບັນຊີເງິນຝາກຂອງກອງທຶນບໍ່ໃຫ້ເກີນລາຍຮັບທັງໝົດຂອງກອງທຶນ ໃນແຕ່ລະປີງົບປະມານ. ການຖອນເງິນກອງທຶນແມ່ນບໍ່ສາມາດຖອນໄດ້ທັງໝົດ ແລະ ຕ້ອງໃຫ້ມີເງິນແຮໄວ້ ສາມສິບ ສ່ວນຮ້ອຍຂອງກອງທຶນ.

**ມາດຕາ 7 ສິດໃນການສັ່ງຈ່າຍ**

ຜູ້ມີສິດສັ່ງຈ່າຍເງິນກອງທຶນຄຸ້ມຄອງໄພພິບັດ ມີດັ່ງນີ້:

1. ຂັ້ນສູນກາງ ຊຶ່ງແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ ຫຼື ຜູ້ຖືກມອບສິດ;
2. ຂັ້ນແຂວງ ຊຶ່ງແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ຫຼື ຜູ້ຖືກມອບສິດ;
3. ຂັ້ນເມືອງ ຊຶ່ງແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ຫຼື ຜູ້ຖືກມອບສິດ.

ໃນກໍລະນີສຸກເສີນ ຄະນະກຳມະການຄຸ້ມຄອງໄພພິບັດ ສາມາດສັ່ງຈ່າຍເງິນກອງທຶນໂດຍກົງເຂົ້າໃນການຄວບຄຸມໄພພິບັດໃນຂັ້ນຂອງຕົນ.

# ໝວດທີ 3
# ການຄຸ້ມຄອງບໍລິຫານກອງທຶນ

**ມາດຕາ 8 ທີ່ຕັ້ງຂອງກອງທຶນ**

ກອງທຶນຄຸ້ມຄອງໄພພິບັດ ໃນແຕ່ລະຂັ້ນມີທີ່ຕັ້ງ ດັ່ງນີ້:

1. ຂັ້ນສູນກາງ ຕັ້ງຢູ່ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ຂັ້ນແຂວງ ຕັ້ງຢູ່ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ຕັ້ງຢູ່ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ນະຄອນ, ເທດສະບານ.

ກອງທຶນຄຸ້ມຄອງໄພພິບັດ ໃນແຕ່ລະຂັ້ນມີສະພາບໍລິຫານກອງທຶນ ແລະ ກອງເລຂາຂອງຕົນ.

**ມາດຕາ 9 ສະພາບໍລິຫານກອງທຶນ**

ສະພາບໍລິຫານກອງທຶນ ແມ່ນ ການຈັດຕັ້ງສູງສຸດຂອງກອງທຶນ ຮັບຜິດຊອບເຄື່ອນໄຫວວຽກງານກອງທຶນ.

ສະພາບໍລິຫານກອງທຶນ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ ຈຳນວນໜຶ່ງທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງ ໂດຍປະທານຄະນະກຳມະການຄຸ້ມຄອງໄພພິບັດ ແຕ່ລະຂັ້ນ.

**ມາດຕາ 10 ໂຄງປະກອບບຸກຄະລາກອນ ຂອງສະພາບໍລິຫານກອງທຶນ ຂັ້ນສູນກາງ**

ສະພາບໍລິຫານກອງທຶນຂັ້ນສູນກາງ ປະກອບດ້ວຍ:

1. ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນປະທານ;
2. ຫົວໜ້າກົມສັງຄົມສົງເຄາະ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;
3. ຫົວໜ້າຫ້ອງການ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;
4. ຫົວໜ້າກົມງົບປະມານ, ກະຊວງການເງິນ ເປັນກຳມະການ;
5. ຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;
6. ຫົວໜ້າພະແນກກຽມພ້ອມ ແລະ ຕອບໂຕ້ໄພພິບັດ, ກົມສັງຄົມສົງເຄາະ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ ທັງເປັນຫົວໜ້າກອງເລຂາ.

**ມາດຕາ 11 ໂຄງປະກອບບຸກຄະລາກອນ ຂອງສະພາບໍລິຫານກອງທຶນ ຂັ້ນແຂວງ**

ສະພາບໍລິຫານກອງທຶນຂັ້ນແຂວງ ປະກອບດ້ວຍ:

1. ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ເປັນປະທານ;
2. ຮອງຫົວໜ້າຫ້ອງວ່າການ ຂັ້ນແຂວງ ເປັນຮອງປະທານ;
3. ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ ເປັນກຳມະການ;
4. ຮອງຫົວໜ້າພະແນກການເງິນ ຂັ້ນແຂວງ ເປັນກຳມະການ;
5. ຫົວໜ້າຂະແໜງສົງເຄາະ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

**ມາດຕາ 12 ໂຄງປະກອບບຸກຄະລາກອນ ຂອງສະພາບໍລິຫານກອງທຶນ ຂັ້ນເມືອງ**

ສະພາບໍລິຫານກອງທຶນຂັ້ນເມືອງ ປະກອບດ້ວຍ:

1. ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ເປັນປະທານ;
2. ຮອງຫົວໜ້າຫ້ອງວ່າການ ຂັ້ນເມືອງ ເປັນຮອງປະທານ;
3. ຮອງຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ຂັ້ນເມືອງ ເປັນກຳມະການ;
4. ຮອງຫົວໜ້າຫ້ອງການການເງິນ ຂັ້ນເມືອງ ເປັນກຳມະການ;
5. ຫົວໜ້າໜ່ວຍງານສົງເຄາະ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນ**

ສະພາບໍລິຫານກອງທຶນແຕ່ລະຂັ້ນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງບໍລິຫານ ກອງທຶນຄຸ້ມຄອງໄພພິບັດ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ, ລະບຽບການຂອງກອງທຶນ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ພິຈາລະນາແຜນການ ແລະ ແຜນງົບປະມານ ການເຄື່ອນໄຫວປະຈຳປີຂອງກອງທຶນ ເພື່ອນຳສະເໜີຕໍ່ຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ ຕົກລົງ ແລະ ຮັບຮອງເອົາ;

3. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບໃຫ້ກອງທຶນ;

4. ຄົ້ນຄວ້າ ແລະ ສ້າງລະບຽບການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ກອງທຶນຄຸ້ມຄອງໄພພິບັດ ແຕ່ລະຂັ້ນ;

5. ສະເໜີ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ບຸກຄະລາກອນຂອງກອງເລຂາກອງທຶນ;

6. ຕິດຕາມ ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃຫ້ສອດຄອງກັບເປົ້າໝາຍນຳໃຊ້ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

7. ສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ທຸກ ເດືອນ ແລະ ໜຶ່ງປີ;

8. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງຄະນະກຳມະການຄຸ້ມຄອງໄພພິບັດ.

**ມາດຕາ 14 ກອງປະຊຸມສະພາບໍລິຫານ**

ກອງປະຊຸມສາມັນ ຂອງສະພາບໍລິຫານ ຈັດຂຶ້ນປີລະສອງເທື່ອ ໃນກໍລະນີມີບັນຫາສຳຄັນທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ແຕ່ ສອງ ຄົນຂຶ້ນໄປ. ກອງປະຊຸມຈະເປີດໄດ້ ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມ ຢ່າງໜ້ອຍສອງສ່ວນສາມຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ.

**ມາດຕາ 15 ກອງເລຂາ**

ກອງເລຂາກອງທຶນ ປະກອບດ້ວຍ ຫົວໜ້າ ແລະ ຮອງຫົວໜ້າ ໜຶ່ງ ຫາ ສອງ ຄົນ ແລະ ພະນັກງານຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການຄຸ້ມຄອງໄພພິບັດ ຕາມການສະເໜີຂອງປະທານສະພາບໍລິຫານກອງທຶນ ຊຶ່ງມີອາຍຸການ ຫ້າ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້ອີກ.

ກອງເລຂາກອງທຶນ ມີຄວາມຮັບຜິດຊອບໂດຍກົງ ຕໍ່ສະພາບໍລິຫານ ກ່ຽວກັບວຽກງານຄຸ້ມຄອງບໍລິຫານກອງທຶນ. ຮອງຫົວໜ້າກອງເລຂາ ເປັນຜູ້ຊ່ວຍຫົວໜ້າກອງເລຂາ ແລະ ມີໜ້າທີ່ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າກອງເລຂາກອງທຶນ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງກອງເລຂາ**

ກອງເລຂາກອງທຶນແຕ່ລະຂັ້ນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂຶ້ນແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະ ລະດົມທຶນເຂົ້າກອງທຶນ ປະຈຳ ທຸກ ເດືອນ ແລະ ປະຈຳປີ ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາ ຮັບຮອງເອົາ ແລະ ສະເໜີຄະນະກຳມະການຄຸ້ມຄອງໄພພິບັດອະນຸມັດ;

2. ສ້າງລະບຽບພາຍໃນຂອງກອງທຶນ ເພື່ອສະເໜີຕໍ່ສະພາບໍລິຫານ;

3. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານປະຈໍາວັນ ຂອງກອງທຶນ ໂດຍສອດຄ່ອງກັບແຜນການ ດ້ວຍຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

4. ຈັດຕັ້ງກິດຈະກໍາຊອກຫາແຫຼ່ງທຶນເພື່ອລະດົມທຶນ ເຂົ້າກອງທຶນ;

5. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກ ຂອງກອງທຶນ;

6. ເບີກຈ່າຍເງິນ ແລະ ວັດຖຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກໍາຕ່າງໆ ຕາມແຜນການຂອງສະພາບໍລິຫານກອງທຶນໄດ້ຮັບຮອງ;

7. ຕິດຕາມ, ກວດກາປະເມີນຜົນການນໍາໃຊ້ກອງທຶນ;

8. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ສະພາບໍລິຫານ ແລະ ຄະນະກໍາມະການຄຸ້ມຄອງໄພພິບັດ ຢ່າງເປັນປົກກະຕິ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງສະພາບໍລິຫານ ແລະ ຄະນະກໍາມະການຄຸ້ມຄອງໄພພິບັດ.

## ໝວດທີ 4
## ບັນຊີຂອງກອງທຶນ, ການກວດສອບ ແລະ ລະບອບການລາຍງານ

### ມາດຕາ 17 ບັນຊີຂອງກອງທຶນ

ກອງທຶນຄຸ້ມຄອງໄພພິບັດແຕ່ລະຂັ້ນ ຕ້ອງມີລະບົບບັນຊີທີ່ຖືກຕ້ອງ ຕາມກົດໝາຍວ່າດ້ວຍ ການບັນຊີ ແລະ ສາມາດເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດ ທີ່ມີຄວາມໝັ້ນຄົງ ແລະ ເຊື່ອຖືໄດ້ ຢູ່ ສປປ ລາວ ຕາມການຕົກລົງຂອງສະພາບໍລິຫານ.

### ມາດຕາ 18 ການກວດສອບບັນຊີ

ບັນຊີກອງທຶນຄຸ້ມຄອງໄພພິບັດ ຕ້ອງໄດ້ຮັບການກວດສອບທຸກປີ ໂດຍອີງການກວດສອບແຫ່ງລັດ. ຜົນການກວດສອບ ຕ້ອງລາຍງານໃຫ້ປະທານຄະນະກໍາມະການຄຸ້ມຄອງໄພພິບັດ ແຕ່ລະຂັ້ນ ແລະ ຖືກພິມເຜີຍແຜ່ໃຫ້ສາທາລະນະຊົນຮັບຊາບ ຕາມການອະນຸຍາດຈາກຄະນະກໍາມະການຄຸ້ມຄອງໄພພິບັດ ແຕ່ລະຂັ້ນ.

### ມາດຕາ 19 ການລາຍງານ

ກອງເລຂາກອງທຶນແຕ່ລະຂັ້ນ ຕ້ອງສົ່ງບົດລາຍງານການເຄື່ອນໄຫວຂອງກອງທຶນ ໃຫ້ສະພາບໍລິຫານຢ່າງເປັນປົກກະຕິ.

## ໝວດທີ 5
## ການກວດກາກອງທຶນ

### ມາດຕາ 20 ການກວດກາ

ການກວດກາ ແມ່ນ ການປະເມີນຜົນການນໍາໃຊ້ກອງທຶນ ເພື່ອຮັບປະກັນຄວາມໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 21 ເນື້ອໃນການກວດກາກອງທຶນ**

ການກວດກາກອງທຶນມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ກ່ຽວກັບກອງທຶນ;
2. ແຫຼ່ງລາຍຮັບຂອງກອງທຶນ, ແຜນລາຍຈ່າຍການຈັດຕັ້ງປະຕິບັດ ແລະ ງົບປະມານຄຸ້ມຄອງບໍລິຫານກອງທຶນ;
3. ການຈັດຕັ້ງປະຕິບັດວຽກງານຂອງພະນັກງານກອງເລຂາກອງທຶນ ແລະ ການປະຕິບັດນະໂຍບາຍຕ່າງໆ.

**ມາດຕາ 22 ຮູບການກວດກາ**

ການກວດກາກອງທຶນຄຸ້ມຄອງໄພພິບັດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາ ເຈົ້າໜ້າທີ່ກວດກາ ຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 23 ເຄື່ອງໝາຍ ແລະ ຕາປະທັບ**

ກອງທຶນຄຸ້ມຄອງໄພພິບັດ ມີເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 24 ການຈັດຕັ້ງປະຕິບັດ**

ຄະນະສະພາບໍລິຫານກອງທຶນ ແລະ ກອງເລຂາກອງທຶນ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບການເຄື່ອນໄຫວຮອບດ້ານຂອງກອງທຶນຄຸ້ມຄອງໄພພິບັດ ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ຢ່າງໜ້ອຍປີລະ ສອງ ຄັ້ງ.

ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 25 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ